**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາປະຊາຊົນແຂວງໄຊຍະບູລີ

ເລກທີ 15 /ສພຂ.ຊຍ

ໄຊຍະບູລີ, ລົງວັນທີ 16 ກຸມພາ 2023

# ມະຕິ
# ກອງປະຊຸມສະພາປະຊາຊົນແຂວງໄຊຍະບູລີ
# ວ່າດ້ວຍການຮັບຮອງເອົາບົດລາຍງານການເຄື່ອນໄຫວວຽກງານ ປະຈໍາປີ 2022 ແລະ ທິດທາງແຜນການເຄື່ອນໄຫວວຽກງານ ປີ 2023 ຂອງສານປະຊາຊົນແຂວງ

- ອີງຕາມ ລັດຖະທໍາມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 63/ສພຊ, ລົງວັນທີ 8 ທັນວາ 2015 ມາດຕາ 77 ກ່ຽວກັບສິດ ແລະ ໜ້າທີ່ ຂອງສະພາປະຊາຊົນຂັ້ນແຂວງ;
- ອີງຕາມ ກົດໝາຍວ່າດ້ວຍ ການປັບປຸງບາງມາດຕາ ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020 ມາດຕາ 59 ວ່າດ້ວຍກອງປະຊຸມປະຈໍາປີ ຂອງສະພາປະຊາຊົນຂັ້ນແຂວງ;
- ອີງຕາມ ບົດລາຍງານຂອງສານປະຊາຊົນແຂວງ ສະບັບເລກທີ 106/ສປຊ.ຊຍ, ລົງວັນທີ 7 ກຸມພາ 2023 ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈໍາປີ 2022 ແລະ ທິດທາງແຜນການເຄື່ອນໄຫວວຽກງານ ປະຈໍາປີ 2023.

ຜ່ານການຄົ້ນຄວ້າ, ພິຈາລະນາ ແລະ ປະກອບຄໍາເຫັນ ຢ່າງເລິກເຊິ່ງ ຕໍ່ບົດລາຍງານການເຄື່ອນໄຫວວຽກງານປະຈໍາປີ 2022 ແລະ ທິດທາງແຜນການວຽກງານຈຸດສຸມ ປີ 2023 ຂອງສານປະຊາຊົນແຂວງ ໃນກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາປະຊາຊົນແຂວງໄຊຍະບູລີ ຊຸດທີ II ຄັ້ງວັນທີ 9 ກຸມພາ 2023.

## ກອງປະຊຸມ ຕົກລົງ:

**ມາດຕາ 1 ຮັບຮອງເອົາບົດລາຍງານການເຄື່ອນໄຫວວຽກງານ ປະຈໍາປີ 2022 ຂອງສານປະຊາຊົນແຂວງ**

ກອງປະຊຸມສະແດງຄວາມຊົມເຊີຍ ຕໍ່ສານປະຊາຊົນແຂວງ ທີ່ໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດໜ້າທີ່ ແລະ ຂອບເຂດສິດຂອງຕົນ ຕາມທີ່ກໍານົດໄວ້ໃນລັດຖະທໍາມະນູນ ແລະ ກົດໝາຍ ໃນສະພາບຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ, ດ້ວຍຄວາມຮັບຜິດຊອບສູງ ເຮັດໃຫ້ແຜນວຽກຈຸດສຸມ ປະຈໍາປີ 2022 ໄດ້ຮັບການຈັດຕັ້ງປະຕິບັດຢ່າງມີຜົນສໍາເລັດ ແລະ ມີການຫັນປ່ຽນດີຂຶ້ນ. **ອັນພົ້ນເດັ່ນ** ໄດ້ສຸມໃສ່ສຶກສາອົບຮົມການເມືອງ-ແນວຄິດ, ຍົກສູງລະດັບຄວາມຮູ້, ຄວາມສາມາດທາງດ້ານທິດສະດີ-ການເມືອງ, ວິຊາສະເພາະ, ຈັນຍາບັນ-ຈັນຍາທໍາ ໃຫ້ແກ່ພະນັກງານ-ລັດຖະກອນ ແລະ ຜູ້ພິພາກສາ; ໄດ້ເອົາໃຈໃສ່ປັບປຸງກົງຈັກການຈັດຕັ້ງ, ແບບແຜນວິທີເຮັດວຽກ, ບັນຈຸຊັບຊ້ອນ, ເລື່ອນຊັ້ນ, ເລື່ອນຂັ້ນໃຫ້ພະນັກງານຂອງສານປະຊາຊົນແຂວງ, ເຂດ ສໍາເລັດໂດຍພື້ນຖານ. ໄດ້ເອົາໃຈໃສ່ປັບປຸງ ກົນໄກການດໍາເນີນຄະດີໃຫ້ມີຄວາມວ່ອງໄວໂປ່ງໃສ ແລະ ຍຸຕິທໍາ ເຊິ່ງສະແດງອອກໃນ 01 ປີ ຜ່ານມາ ຢູ່ສານປະຊາຊົນແຂວງ ແລະ ສານປະຊາຊົນເຂດທັງ 03 ເຂດ ມີຄະດີຄ້າງມາທັງໝົດ 45 ເລື່ອງ, ເຂົ້າໃໝ່ 824 ເລື່ອງ, ລວມທັງໝົດ 869 ເລື່ອງ, ສາມາດແກ້ໄຂໄດ້ 826 ເລື່ອງ, ເທົ່າກັບ 95,05% ທຽບໃສ່ແຜນການປີ ລື່ນຄາດໝາຍທີ່ວາງໄວ້.



สแกนด้วย CamScanner

ຄຽງຄູ່ກັນນັ້ນ ກອງປະຊຸມເຫັນວ່າ ຍັງມີບາງວຽກງານຈຳນວນໜຶ່ງທີ່ສານປະຊາຊົນແຂວງຈະຕ້ອງໄດ້ປັບປຸງແກ້ໄຂ ເປັນຕົ້ນ: ການພິຈາລະນາແກ້ໄຂຄະດີທີ່ເຂົ້າມາສານ ຈຳນວນໜຶ່ງຍັງຊັກຊ້າ ຍັງບໍ່ຖືກຕ້ອງຕາມກຳນົດເວລາ ທີ່ກົດໝາຍກຳນົດໄວ້; ການເກັບກຳຂໍ້ມູນ, ການຊັ່ງຊາ, ຕີລາຄາ, ວິໄຈຂໍ້ມູນຫຼັກຖານ ຍັງບໍ່ທັນຮອບດ້ານ, ຄົບຖ້ວນ, ພາວະວິໄສ; ການດຳເນີນຄະດີໃນທີ່ປະຊຸມສານ ຍັງບໍ່ທັນຮັບປະກັນໃຫ້ຄູ່ຄວາມ, ບຸກຄົນທີສາມ ໄດ້ໂຕ້ຖຽງກັນເທົ່າທີ່ຄວນ; ການຕິດຕາມກວດກາການພິຈາລະນາຄະດີຂອງສານປະຊາຊົນເຂດຍັງບໍ່ທັນເປັນປົກກະຕິ ໃນໄລຍາຜ່ານມາຍັງເຫັນວ່າການຄົ້ນຄວ້າຄະດີບາງເລື່ອງ ທີ່ມີການຂໍອຸທອນ ຍັງຕັດສິນລົບລ້າງທັງໝົດ ຫຼື ບາງສ່ວນ.

**ມາດຕາ 2 ຮັບຮອງເອົາທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2023 ຂອງສານປະຊາຊົນແຂວງ**

ກອງປະຊຸມເຫັນດີຮັບຮອງເອົາບັນດາເນື້ອໃນ ທີ່ກຳນົດໄວ້ໃນຄາດໝາຍສູ້ຊົນ ແລະ ທິດທາງແຜນການຈຸດສຸມ ປະຈຳປີ 2023 ທີ່ໄດ້ກຳນົດ 04 ຄາດໝາຍ, 09 ວຽກງານຈຸດສຸມ ແຕ່ກອງປະຊຸມສະເໜີໃຫ້ ສານປະຊາຊົນແຂວງເອົາໃຈໃສ່ ດັ່ງນີ້:

1. ສ້າງຜູ້ພິພາກສາ, ພະນັກງານຂອງສານໃຫ້ມີຄຸນທາດການເມືອງ, ຈັນຍາບັນ-ຈັນຍາທຳ ໜັກແໜ້ນ ແລະ ມີຄວາມສາມາດທາງດ້ານວິຊາສະເພາະ-ວິຊາການ, ພາສາຕ່າງປະເທດ ໃຫ້ມີຄຸນນະພາບ, ເດັດຂາດ, ໂປ່ງໃສ ແລະ ເປັນມືອາຊີບ, ໂດຍຖືເອົາການປະເມີນຜູ້ພິພາກສາດີ-ເກັ່ງໃຫ້ໄດ້ 25% ຂຶ້ນໄປຂອງຜູ້ພິພາກສາທັງໝົດ;
2. ພິຈາລະນາ ແກ້ໄຂຄະດີ ໃຫ້ມີຄວາມວ່ອງໄວ ບັນລຸ 85% ຕໍ່ປີ ແລະ ຮັບປະກັນການຕັດສິນຄະດີມີຄຸນນະພາບ ອັດຕາການຂໍອຸທອນບໍ່ໃຫ້ເກີນ 15%;
3. ຮັບປະກັນການບໍລິຫານສານໃນການດຳເນີນຄະດີໃຫ້ມີຄຸນນະພາບ ແລະ ປະສິດທິພາບສູງ, ມີພື້ນຖານວັດຖຸເຕັກນິກທີ່ທັນສະໄໝເໝາະສົມ ຮັບໃຊ້ການເກັບກຳຂໍ້ມູນຫຼັກຖານ ແລະ ການຕັດສິນຄະດີ ໃຫ້ມີຄວາມວ່ອງໄວ, ຖືກຕ້ອງຕາມກົດໝາຍ ແລະ ຄວາມເປັນຈິງ;
4. ເພີ່ມທະວີ ການປະສານສົມທົບ ກັບ ຂະແໜງການທີ່ກ່ຽວຂ້ອງ ກ່ຽວກັບການດຳເນີນຄະດີຕາມຂະບວນຍຸຕິທຳ ຕາມມະຕິ ສະບັບເລກທີ 112/ກມສພ, ລົງວັນທີ 02 ມິຖຸນາ 2020 ໃຫ້ມີຄວາມຄ່ອງຕົວ;
5. ສືບຕໍ່ຮ່ວມມືກັບສາກົນ ຕາມແນວທາງການຕ່າງປະເທດຂອງພັກ ແລະ ປະສານສົມທົບກັບສາຍຕັ້ງ ແລະ ສາຍຂວາງ ເພື່ອຂໍຮ່ວມມືແຮກສ່ຽວ ກັບ ສານປະຊາຊົນແຂວງ ອຽນບາຍ ແລະ ແຂວງອື່ນໆ ຂອງ ສສ ຫວຽດນາມ.

**ມາດຕາ 3 ຮັບຮອງເອົາບັນດາມາດຕະການຈັດຕັ້ງປະຕິບັດ ຂອງສານປະຊາຊົນແຂວງ**

ກອງປະຊຸມເຫັນດີເປັນເອກະພາບຕໍ່ 04 ມາດຕະການຈັດຕັ້ງປະຕິບັດ ທີ່ສານປະຊາຊົນແຂວງ ໄດ້ກຳນົດໄວ້ໃນບົດລາຍງານ ແຕ່ກອງປະຊຸມສະເໜີບາງມາດຕະການເພີ່ມເຕີມ ດັ່ງນີ້:

1. ເພີ່ມທະວີຄວາມຮັບຜິດຊອບການເມືອງ ຂອງຄະນະພັກ-ຄະນະນຳສານປະຊາຊົນແຂວງ ໃນການນຳພາ-ຊີ້ນຳຈັດຕັ້ງຜັນຂະຫຍາຍ ມະຕິກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາປະຊາຊົນແຂວງ ຊຸດທີ II ໃຫ້ເປັນແຜນງານ, ໂຄງການ ແລະ ວຽກງານຈຸດສຸມ ທີ່ແທດເໝາະກັບໜ້າທີ່ການເມືອງ ຂອງສານປະຊາຊົນ, ນຳພາ-ຊີ້ນຳການຈັດຕັ້ງປະຕິບັດທິດທາງວຽກງານ ປີ 2023 ໃຫ້ເກີດເປັນຮູບປະທຳ ແລະ ທັງຈັດຕັ້ງເຜີຍແຜ່ເຊື່ອມຊຶມ ວຽກງານດັ່ງກ່າວໃຫ້ບັນດາຜູ້ພິພາກສາ ແລະ ພະນັກງານຂອງສານປະຊາຊົນ ຢ່າງທົ່ວເຖິງ, ເລິກເຊິ່ງ ເພື່ອເຮັດໃຫ້ບັນດາຄາດໝາຍສູ້ຊົນ ໃນປີ 2023 ໄດ້ຮັບການຈັດຕັ້ງປະຕິບັດ ຢ່າງມີຜົນສຳເລັດ ຕາມແຜນການທີ່ກຳນົດໄວ້;
2. ຍົກລະດັບທາງດ້ານວິຊາສະເພາະ, ຄວາມຮູ້ຄວາມສາມາດ, ທັກສະ, ພົບໄຫວໃນການຄົ້ນຄວ້າຄະດີ ກໍຄືຄວາມເປັນແບບຢ່າງໃນການເຄົາລົບ ແລະ ປະຕິບັດກົດໝາຍຢ່າງເຂັ້ມງວດ, ເອົາໃຈໃສ່ຕິດຕາມກວດກາ ການປະຕິບັດໜ້າທີ່ຂອງຜູ້ພິພາກສາ ແລະ ຕີລາຄາປະເມີນຜົນຜູ້ພິພາກສາ ຊອກໃຫ້ໄດ້ຜູ້ທີ່



สแกนด้วย CamScanner

ດີ-ເກັ່ງ ມີຜົນງານ ແລະ ເປັນແບບຢ່າງນໍາໜ້າເພື່ອຍ້ອງຍໍສົ່ງເສີມ ແລະ ສ້າງເປັນພະນັກງານສືບທອດ ພ້ອມທັງມີມາດຕະການຕໍ່ຜູ້ພິພາກສາ ທີ່ມີເຈດຕະນາລະເມີດກົດໝາຍ ຢ່າງເຂັ້ມງວດ ແລະ ເດັດຂາດ;

3. ເພີ່ມທະວີການຕິດຕາມກວດກາ ການດໍາເນີນຄະດີຢູ່ສານແຂວງ, ເຂດ ຢ່າງເປັນປົກກະຕິ, ຕໍ່ເນື່ອງ ເພື່ອເຮັດໃຫ້ການດໍາເນີນຄະດີ ມີຄວາມຖືກຕ້ອງຕາມກົດໝາຍ ແລະ ຕາມຄວາມເປັນຈິງ;
4. ເອົາໃຈໃສ່ປະຕິບັດແຜນການສ້າງນິຕິກໍາໃຕ້ກົດໝາຍທີ່ຈໍາເປັນ ໃນການປະຕິບັດວຽກງານຂອງຕົນ ແລະ ການປະເມີນກົດໝາຍໃນຂົງເຂດຕົນເອງ;
5. ເພີ່ມທະວີການປະສານສົມທົບ ກັບ ພາກສ່ວນທີ່ກ່ຽວຂ້ອງ, ສາຍຕັ້ງ, ສາຍຂວາງ ເພື່ອຮັບປະກັນໃນການດໍາເນີນຄະດີ;

**ມາດຕາ 4 ການຈັດຕັ້ງປະຕິບັດ**

1. ມອບໃຫ້ສານປະຊາຊົນແຂວງ, ສານປະຊາຊົນເຂດໃນທົ່ວແຂວງປະສານສົມທົບກັບພາກສ່ວນກ່ຽວຂ້ອງ ຈັດຕັ້ງປະຕິບັດມະຕິສະບັບນີ້ໃຫ້ໄດ້ຮັບຜົນດີ;
2. ມອບໃຫ້ອົງການປົກຄອງແຂວງ ເພີ່ມດ້ານງົບປະມານ, ອຸປະກອນ ເພື່ອສາມາດຈັດຕັ້ງປະຕິບັດໜ້າທີ່ການເມືອງຂອງຕົນ ຕາມກົດໝາຍໃຫ້ສໍາເລັດຕາມແຜນການທີ່ວາງໄວ້;
3. ມອບໃຫ້ຄະນະປະຈໍາສະພາປະຊາຊົນແຂວງ, ຄະນະກໍາມະການຍຸຕິທໍາ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາປະຊາຊົນແຂວງ ຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດມະຕິສະບັບນີ້ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 5 ຜົນສັກສິດ**

ມະຕິສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານສະພາປະຊາຊົນແຂວງ**

ເພັງນິລັນ ຄໍາພັນເພັງ



สแกนด้วย CamScanner